ແຜນທິດທາງການຫັນປ່ຽນໂດຍຫຍໍ້

ກອງຂົນສົ່ງພອດແລນ (Portland Bureau of Transportation - PBOT) ກຳລັງຈັດທຳຮ່າງກົດໝາຍວ່າດ້ວຍຜູ້ພິການຄົນອາເມລິກັນ (ADA) ຫົວຂໍ້ II ແຜນທິດທາງການຫັນປ່ຽນຕາມເສັ້ນທາງສິດທິສາທາລະນະ ເພື່ອຂໍຮັບການທົບທວນຄືນຈາກພົນລະເມືອງຈົນເຖິງວັນທີ 20 ພະຈິກ 2020.

PBOT ມີຄວາມມຸ່ງໝັ້ນທີ່ຈະໃຫ້ຜູ້ຊົມໃຊ້ທຸກຄົນສາມາດເຂົ້າເຖິງລະບົບການຂົນສົ່ງ. ໃນເວລາທີ່ພວກເຮົາລົງທຶນໃສ່ພື້ນຖານໂຄງລ່າງດ້ານການຂົນສົ່ງ, ພວກເຮົາຈະດຳເນີນການດັ່ງກ່າວໃນຮູບແບບທີ່ສະໜັບສະໜູນການເຂົ້າເຖິງຊຸມຊົນຜິວສີ, ຊຸມຊົນທີ່ມີລາຍໄດ້ຕ່ຳ ແລະ ຄົນພິການໃຫ້ຫຼາຍຂຶ້ນ ແລະ ດີກວ່າເກົ່າ.

ການທົບທວນຄືນ ແລະ ການປະກອບຄຳຄິດເຫັນຂອງປະຊາຊົນເຂົ້າໃນແຜນດັ່ງກ່າວແມ່ນເປັນສິ່ງທີ່ສຳຄັນ ເພື່ອຮັບປະກັນວ່າມັນຈະຕອບສະໜອງຕາມຄວາມຕ້ອງການຂອງທ່ານ. ເຊິ່ງຈະຕ້ອງມີຄຳເຫັນເຫຼົ່ານັ້ນເທົ່ານັ້ນ ຈຶ່ງຖືວ່າເປັນແຜນສະບັບສົມບູນທີ່ PBOT ຈະນຳສົ່ງໄປຫາສະພາຂອງເມືອງໃນຕົ້ນປີ 2021 ແລ້ວຈຶ່ງຈະທົບທວນຄວາມຕ້ອງການຂອງຊາວເມືອງພອດແລນ. ກະລຸນາເຂົ້າອ່ານແຜນດັ່ງກ່າວໃນເວັບໄຊທ໌ຂອງພວກເຮົາ ພ້ອມທັງເຮັດແບບສຳຫຼວດ.

[ເວັບໄຊທ໌ກ່ຽວກັບແຜນທິດທາງການຫັນປ່ຽນ]

[ແບບສຳຫຼວດແຜນທິດທາງການຫັນປ່ຽນ]

ກົດໝາຍວ່າດ້ວຍຜູ້ພິການຄົນອາເມລິກັນ (The Americans with Disabilities Act - ADA) ຫົວຂໍ້ II ກຳນົດໃຫ້ທຸກລັດ ຫຼື ລັດຖະບານທ້ອງຖິ່ນທີ່ມີເຈົ້າໜ້າທີ່ 50 ຄົນຂຶ້ນໄປ ແມ່ນຈະຕ້ອງມີແຜນທິດທາງການຫັນປ່ຽນ.

ແຜນທິດທາງການຫັນປ່ຽນຕ້ອງລວມມີອົງປະກອບເຫຼົ່ານີ້.

- ກຳນົດສິ່ງກີດຂວາງຕໍ່ທຸກໆກິດຈະກຳຂອງ PBOT ແລະ ທີ່ຢູ່ຕາມຖະໜົນ ພ້ອມທັງຕາມຂອບທາງຍ່າງ
- ກຳນົດງົບປະມານ ແລະ ກຳນົດເວລາ
- ມີຂັ້ນຕອນການຮ້ອງຮຽນຈັດຫາໄວ້ໃຫ້

- ກຳນົດບຸກຄົນທີ່ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ
- ສະໜອງການເຂົ້າເຖິງທຸກໆຢ່າງທີ່ລັດຖະບານດຳເນີນງານ

ຢູ່ຕາມຖະໜົນ ຫຼື ຕາມຂອບທາງຍ່າງ, PBOT ຈະເປັນຜູ້ຮັບຜິດຊອບທາງລາດລົງຕາມຂອບທາງຍ່າງ, ສັນຍານຂ້າມທາງມ້າລາຍ, ຂອບທາງຍ່າງ, ບ່ອນຈອດລົດ ແລະ ປ້າຍຈອດລົດລາງ ແລະ ລົດທົ່ວໄປ. ປ້າຍຈອດລົດເມ ແລະ ລົດລາງ ແມ່ນເປັນກຳມະສິດຂອງ TriMet ແຕ່ວ່າເສັ້ນທາງ ຫຼື ຂອບທາງຍ່າງ ແມ່ນເປັນກຳມະສິດຂອງເມືອງ. PBOT ຈະດຳເນີນງານຮ່ວມກັບ TriMet ເພື່ອຮັບປະກັນວ່າປ້າຍຈອດລົດເມເຫຼົ່ານັ້ນແມ່ນມີຄວາມສອດຄ່ອງກັນ.

ບັນດາໂຄງການຂອງ PBOT ແມ່ນຈະມີຂອບທາງຍ່າງຢູ່ຕາມເສັ້ນທາງໃຫຍ່, ທາງລາດລົງຕາມຂອບທາງຍ່າງ, ສັນຍານຂ້າມທາງມ້າລາຍ, ບ່ອນຈອດລົດ ແລະ ປ້າຍຈອດລົດເມ ເຊິ່ງທຸກຄົນຈະສາມາດເຂົ້າໃຊ້ໄດ້. ບາງຄັ້ງ, ບັນດານັກພັດທະນາ ແລະ ບໍລິສັດສາທາລະນູປະໂພກ ກໍຈະກຳຈັດສິ່ງກີດຂວາງຕ່າງໆ ເພື່ອເຮັດໃຫ້ສາມາດເດີນທາງໄປມາໃນເມືອງໄດ້ຢ່າງສະດວກຍິ່ງຂຶ້ນ. ນອກຈາກນັ້ນ, ບັນດາໂຄງການຂອງ PBOT ເຊັ່ນ: ເສັ້ນທາງໄປໂຮງຮຽນທີ່ປອດໄພ ແລະ ຖະໜົນທີ່ໃຊ້ຮ່ວມກັນ ກໍຈະກຳຈັດສິ່ງກີດຂວາງຕ່າງໆ.

ໂຄງການທາງລາດລົງຕາມຄຳຮ້ອງຂໍ ແມ່ນເປີດໂອກາດໃຫ້ຊາວເມືອງພອດແລນສາມາດສົ່ງຄຳຮ້ອງຂໍກ່ຽວກັບຕຳແໜ່ງທີ່ຕ້ອງການໃຫ້ມີທາງລາດລົງຕາມຂອບທາງຍ່າງ ເຊິ່ງຈະຊ່ວຍອຳນວຍຄວາມສະດວກໃນການເດີນທາງໄປມາໃຫ້ແກ່ຕົນເອງ ຫຼື ສະມາຊິກໃນຄອບຄົວຜູ້ທີ່ມີຄວາມພິການ ເຊິ່ງອາໄສຢູ່ໃນບໍລິເວນໃກ້ຄຽງກັບພວກເຂົາ.

ເຊິ່ງຈະມີເບີໂທລະສັບ 503-823-SAFE (7233) ກຳນົດໄວ້ໃຫ້ ເພື່ອໃຊ້ໃນການລາຍງານກ່ຽວກັບຂອບທາງຍ່າງ ຫຼື ຕຳແໜ່ງຂອງຖະໜົນທີ່ບໍ່ປອດໄພ. ນອກຈາກນັ້ນ, ກໍຍັງມີຂັ້ນຕອນການຮ້ອງຮຽນທາງການ ແລະ ທີ່ແຍກອອກຕ່າງຫາກ.

ນີ້ແມ່ນແຜນໄລຍະ 20 ປີ ພ້ອມກັບຈະມີການປັບປຸງໃໝ່ຢ່າງໜ້ອຍທຸກໆ 5 ປີ. ຈະມີບົດລາຍງານປະຈຳປີກ່ຽວກັບຄວາມຄືບໜ້າທີ່ກຳລັງດຳເນີນການຢູ່. ເຊິ່ງມີງົບປະມານທີ່ຈັດສັນໃຫ້ແກ່ການກໍ່ສ້າງທາງລາດລົງຕາມຂອບທາງຍ່າງຈົນຮອດປີ 2032 ທີ່ກ່ຽວພັນກັບຂໍ້ຕົກລົງທີ່ແຍກຕ່າງຫາກ. ງົບປະມານຂອງໂຄງການ

PBOT, ການດຳເນີນງານໂດຍເຈົ້າໜ້າທີ່ບຳລຸງຮັກສາ PBOT, ການດຳເນີນງານໂດຍໜ່ວຍງານສາທາລະນຸປະໂພກ ແລະ ການກໍ່ສ້າງໂດຍຜູ້ພັດທະນາສ່ວນຫຼາຍ ແມ່ນຈະປະກອບໄປດ້ວຍການກໍ່ສ້າງທາງຍ່າງ, ທາງລາດລົງຕາມຂອບທາງຍ່າງ, ສັນຍານຂ້າມທາງມ້າລາຍ, ບ່ອນຈອດລົດ ແລະ ປ້າຍຈອດລົດເມໃຫ້ມີຄວາມສອດຄ່ອງກັນ.

PBOT ຈະເປີດໃຫ້ເຂົ້າຢ້ຽມຢາມແບບອອນລາຍສອງສາມຄັ້ງ ເພື່ອໃຫ້ປະຊາຊົນສາມາດຮຽນຮູ້ເພີ່ມເຕີມກ່ຽວກັບແຜນທິດທາງການຫັນປ່ຽນດັ່ງກ່າວ. PBOT ໄດ້ຕິດຕໍ່ໄປຫາຫຼາຍກວ່າ 150 ອົງກອນ ເພື່ອຂໍຮັບການທົບທວນຄືນ ແລະ ຄຳຄິດເຫັນຂອງພວກເຂົາຕໍ່ກັບແຜນດັ່ງກ່າວ.

ຫຼັງຈາກສິ້ນສຸດໄລຍະເວລາໃນການປະກອບຄຳຄິດເຫັນຂອງປະຊາຊົນໃນວັນທີ 20 ພະຈິກ 2020, PBOT ຈະປັບປຸງຮ່າງແຜນດຳເນີນງານ ແລະ ສົ່ງໃຫ້ສະພາເມືອງ ເພື່ອທຳການຮັບຮອງເອົາໃນຕົ້ນປີ 2021.

ສາມາດສົ່ງຄຳຖາມ ຫຼື ຄຳຄິດເຫັນຜ່ານທາງອີເມວໄປທີ່ ADATransitionPlan@portlandoregon.gov

16 ກັນຍາ 2020